ໂຄງການຄົ້ນຄວ້າການຄໍ້າປະກັນສະບຽງອາຫານ
ຢູ່ເຂດພູດອຍພາກເໜືອ ສ.ປ.ປລາວ
FOOD SECURITY NORTHERN UPLANDS

# ການສຶກສາຕະຫຼາດ (ກິດຈະກໍາ 2.2)


ຈິດປະສົງ ກຸສິນສະຫວັດ

Roy Murray-Prior


ກອງປະຊຸມປຶກສາຫາລືໂຄງການຄໍ້າປະກັນສະບຽງອາຫານຢູ່ເຂດພູດອຍ, ພາກເໜືອຂອງລາວ
ນະຄອນຫຼວງວຽງຈັນ, 18 ພະຈິກ 2015

# ພາກສະເຫີນ

## ການຄ້ຳປະກັນສະບຽງອາຫານແມ່ນຫຍັງ?

ການຄ້ຳປະກັນສະບຽງອາຫານເກີດຂື້ນເມື່ອຫມົດ
ທຸກຄົນມີການເຂົ້າຫາອາຫານ (ທາງດ້ານຟີຊິກ,
ເສດຖະກິດ ແລະ ສັງຄົມ) ທີປອດໄພ ແລະ ອຸດົມໄປ
ດ້ວຍສານອາຫານໄດ້ຕະຫຼອດເວລາທີ່ຮ່າງກາຍ
ຕ້ອງການ ແລະ ພຽງພໍຕໍ່ກັບຄວາມຕ້ອງການ
ເພື່ອການດຳລົງຊີວິດ ແລະ ສຸຂະພາບທີ່ແຂງແຮງ

# ພາກສະເໜີ

- ແນວຄວາມຄິດຂອງການຄ້ຳປະກັນສະບຽງອາຫານ



# ປັດໃຈທີ່ສົ່ງຜົນຕໍ່ກັບອົງປະກອບຂອງການຄ້ຳປະກັນສະບຽງອາຫານ

ກະສິກຳ

ເສດຖະກິດ

ການເມືອງ

ພູມອາກາດ

ສັງຄົມ

ທໍ່ລະນີວິທະຍາ

ປະຫວັດສາດ

ສັງຄົມວິທະຍາ

ທຳມະຊາດ

ສາດສະໜາ

ນິເວດວິທະຍາ

ຊີວະວິທະຍາ

4 ອົງປະກອບຂອງການຄ້ຳປະກັນສະບຽງອາຫານ

# ຄວາມກ່ຽວຂ້ອງຂອງກິດຈະກໍາທາງດ້ານ ຕະຫຼາດ ແລະ ການຄໍ້າປະກັນສະບຽງອາຫານ

ການເຂົ້າຫາ
ອາຫານ

FOOD ACCESS

- ກໍາລັງຊື້ ແລະ ຄ່າໃຊ້ຈ່າຍເພື່ອໃຫ້ໄດ້ມາຂອງອາຫານ ( Purchasing Power and Food Costs )

ກໍາລັງການຊື້ລວມມີຫຍັງແດ່?

- ລາຍຮັບ
- ຍຸດທະສາດການດໍາລົງຊີວິດອື່ນໆ (ການເກັບອາຫານມາຈາກປ່າ, ການຄ້າ..)

http://www.foodsec.org

# ຈຸດປະສົງ

- ໄດ້ແຍກບັນດາອຸປະສັກ ແລະ ໂອກາດທາງດ້ານຕະຫຼາດ ເພື່ອປັບປຸງການຄໍ້າປະກັນສະບຽງອາຫານໃນລະດັບຄອບຄົວໃນເຂດພູດອຍ, ພາກເໜືອຂອງລາວ
- ຈຸດສຸມ: ໄດ້ແຍກຄຸນລັກສະນະຂອງຕະຫຼາດຜະລິດຕະພັນກະສິກໍາ, ຊຶ່ງຈະເຈາະຈົງໃສ່ການສຶກສາບັນດາລະບຽບ, ຫຼັກການ, ໂຄງສ້າງຂອງຕະຫຼາດ, ກົນໄກທາງດ້ານລາຄາ ແລະ ໄລຍະຫ່າງໃນການເຊື່ອມໂຍງເຂົ້າຫາຕະຫຼາດ

# ຄຳຖາມຂອງການຄົ້ນຄວ້າ

- ປັດຈຸບັນນີ້ຕະຫຼາດຜະລິດຕະພັນກະສິກຳແມ່ນມີລັກສະນະຄືແນວໃດ?
- ຕະຫຼາດມີການດຳເນີນງານຄືແນວໃດ?
- ລະບຽບ, ຫຼັກການໃນການດຳເນີນງານຂອງຕະຫຼາດມີຫຍັງແດ່?
- ແມ່ນຫຍັງແມ່ນອຸປະສັກຕົ້ນຕໍທີ່ກີດກັ້ນການເຂົ້າຮ່ວມໃນກິດຈະກຳຂອງການຕະຫຼາດຂອງກຸ່ມເປົ້າໝາຍໃນປັດຈຸບັນ?
- ມີໂອກາດທາງດ້ານການຕະຫຼາດອັນໃດແດ່ທີ່ກຸ່ມເປົ້າໝາຍສາມາດສວຍໃຊ້ເພື່ອເຂົ້າຮ່ວມໃນຂະບວນການທາງການຕະຫຼາດຂອງກຸ່ມເປົ້າໝາຍ?

# ວິທີການທີ່ຈະນຳໃຊ້ໃນການວິເຄາະ

- ນຳໃຊ້ການປະສົມປະສານການວິເຄາະລະບົບທຸລະກິດກະສິກຳ ໂດຍການນຳໃຊ້ເຄື່ອງມືການວິໄຈຕ່ອງໂສ້ມູນຄ່າ.

- ການຈັດກອງປະຊຸມປຶກສາຫາລືກັບບັນດາພາກສ່ວນທີ່ກ່ຽວຂ້ອງ ເພື່ອໄຈ້ແຍກ, ປະຕິບັດ ແລະ ປະເມີນການແຊກແຊງທີ່ມີຈຸດປະສົງໃນການປັບປຸງສະຖານະພາບການຄ້ຳປະກັນຂອງຄອບຄົວ.

# ແນວຄວາມຄິດກ່ຽວກັບຕ່ອງໂສ້

ຜູ້ໃຫ້ບໍລິການ: ນັກກະສິກຳ, ສັດຕະວະແພດ, ບໍລິສັດຂົນສົ່ງ, ສະຖາບັນການເງິນ....

ຜູ້ສະໜອງສິ່ງນຳເຂົ້າ

ຜູ້ຜະລິດ

ຜູ້ແປຮູບ
ຜູ້ຂົນສົ່ງ
ຜູ້ຂາຍ

ຜູ້ບໍລິໂພກ

ຜະລິດຕະພັນ, ການເງິນ (ຕົ້ນທຶນ ແລະ ກຳໄລ), ຂໍ້ມູນຂ່າວສານ

ຂໍ້ມູນຂ່າວສານ-ພຶດຕິກຳຂອງອົງປະກອບໃນຕ່ອງໂສ້, ລະບຽບຫຼັກການ

ສາຍພົວພັນ-ທີ່ມີການຮ່ວມມືກັນ

ການເງິນ-ການເພີ່ມມູນຄ່າ

# ເຄື່ອງມືທີ່ນຳໃຊ້ເຂົ້າໃນການວິເຄາະຕ່ອງໂສ້ມູນຄ່າ (M4P 2008)

1. ເຄື່ອງມືການວິເຄາະທົ່ວໄປ
   - ໃຈ້ແຍກຕ່ອງໂສ້ມູນຄ່າບູລິມະສິດໃນການວິເຄາະ
   - ສ້າງແຜນວາດຕ່ອງໂສ້ບູລິມະສິດ
2. ເຄື່ອງມືທາງດ້ານຄຸນນະພາບ
   - ການປົກຄອງຕ່ອງໂສ້: ການປະສານງານ, ລະບຽບຫຼັກການ ແລະ ການຄວບຄຸມການດຳເນີນງານຂອງຕ່ອງໂສ້
   - ການເຊື່ອມໂຍງ, ສາຍພົວພັນ ແລະ ຄວາມເຊື່ອໝັ້ນພາຍໃນຕ່ອງໂສ້
   - ວິເຄາະທາງເລືອກສຳລັບການປັບປຸງຄວາມຮູ້, ທັກສະ, ເຕັກໂນໂລຊີ ແລະ ບັນດາການບໍລິການທີ່ສະໜັບສະໜູນການດຳເນີນງານຂອງຕ່ອງໂສ້
3. ເຄື່ອງມືທາງດ້ານປະລິມານ
   - ວິເຄາະຕົ້ນທຶນ ແລະ ສ່ວນຕ່າງຂອງຕ່ອງໂສ້
   - ວິເຄາະການແຈກຢາຍທາງດ້ານລາຍຮັບ
   - ວິເຄາະສະພາບການແຈກຢາຍທາງດ້ານການຈ້າງງານພາຍໃນຕ່ອງໂສ້.

# ການເກັບກໍາຂໍ້ມູນ

- ຂໍ້ມູນມືສອງ
  - ສຶກສາເອກະສານ
    - ເພື່ອເປັນການສຶກສາຂໍ້ມູນທີ່ກ່ຽວຂ້ອງທີ່ສາມາດຮັບໃຊ້ເຂົ້າໃນການວິໄຈ
- ຂໍ້ມູນມືໜຶ່ງ
  - ການຈັດກອງປະຊຸມກໍາບັນດາພາກສ່ວນທີ່ກ່ຽວຂ້ອງ
    - ເພື່ອໄຈ້ແຍກ ແລະ ຈັດບູລິມະສິດບັນຫາ ແລະ ທາງອອກ
  - ການສໍາຫຼວດ
    - ເພື່ອໃຫ້ຂໍ້ມູນມານໍາໃຊ້ໃນການໄຈ້ແຍກ, ການປະຕິບັດ ແລະ ການປະເມີນການເຂົ້າໄປແຊກແຊງເພື່ອປັບປຸງການຄໍ້າປະກັນສະບຽງອາຫານ.

# ອື່ງປະກອບອື່ນໆ

- ສຶກສາບັນດາເອກະສານ
- ໄດ້ແຍກພື້ນທີ່ ແລະ ຜະລິດຕະພັນທີ່ຈະສຶກສາ (ອີງໃສ່ຂໍ້ມູນທີ່ມີ ແລະ ການປຶກສາຫາລືກັບອຳນາດການປົກຄອງຈາກແຂວງເປົ້າໝາຍ)
- ສຶກສາການປ່ຽນແປງທາງດ້ານລາຄາຂອງບັນດາລາຍການຜະລິດຕະພັນທີ່ກຳນົດໄວ້
- ສ້າງແຜນວາດ ແລະ ທຳຄວາມເຂົ້າໃຈເຖິງສະພາບແວດລ້ອມທີ່ປິ່ນອ້ອມຕ່ອງໂສ້
- ໄດ້ແຍກບັນຫາ ແລະ ໂອກາດຂອງຕ່ອງໂສ້
- ໄດ້ແຍກການແຊກແຊງເພື່ອການປັບປຸງການດຳເນີນງານຂອງຕ່ອງໂສ້ ແລະ ປັບປຸງການເຂົ້າຫາຕະຫຼາດຂອງກຸ່ມເປົ້າໝາຍ

# ຜົນທີ່ຄາດວ່າຈະໄດ້ຮັບ

- ຮູ້ຈັກໂຄງສ້າງ, ລະບຽບຫຼັກການທີ່ກ່ຽວຂ້ອງ ແລະ ການດໍາເນີນງານຂອງຕະຫຼາດຜະລິດຕະພັນກະສິກໍາໃນເຂດສຶກສາ

- ໄດ້ແຍກໄດ້ບັນດາອຸປະສັກທີ່ກີດກັ້ນການເຂົ້າຮ່ວມໃນຂະບວນການທາງການຕະຫຼາດຂອງກຸ່ມເປົ້າໝາຍ

- ສາມາດຈໍາແນກໄດ້ບັນດາໂອກາດໃນການເຂົ້າຮ່ວມໃນກິດຈະກໍາທາງການຕະຫຼາດຂອງກຸ່ມເປົ້າໝາຍ

- ໃຫ້ຂໍ້ສະເໜີແນະໃນການເຂົ້າໄປແຊກແຊງເພື່ອການປັບປຸງການດໍາເນີນງານຂອງຕະຫຼາດ ແລະ ຮັບປະກັນການເຂົ້າຮ່ວມໄດ້ຂອງກຸ່ມເປົ້າໝາຍ

# ຜະລິດຕະພັນເປົ້າໝາຍໃນການສຶກສາ

- ພືດ: ເຂົ້າ, ສາລີລ້ຽງສັດ, ມັນຕົ້ນ, ຜັກ
- ສັດ: ງົວ, ໝູ, ສັດປີກ, ປາ
  - ແຫຼ່ງຂໍ້ມູນ:
- Agricultural development strategy till 2020 and vision till 2030 (March 2015, by MAF)
- Food and nutrition security atlas of Lao PDR (2013, by WFP)
- Agricultural census 2011
- LECS5

# ຂໍຂອບໃຈສຳລັບການຮັບຟັງຂອງທ່ານ